ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ

ກອງສະໜາມບິນລາວ

ເລກທີ 7444 /ກສລ

ນະຄອນຫລວງວຽງຈັນ, ວັນທີ 10 ພັນວາ 2025

## ໜັງສືແຈ້ງເຊີນປະມູນ

1. ກອງສະໜາມບິນລາວ ຂໍເຊີນບັນດາບໍລິສັດທີ່ສົນໃຈ ແລະ ມີຄຸນນະວຸທິເຫມາະສົມ ເຂົ້າຍື່ນຊອງປະມູນ ວຽກແຕ້ມເສັ້ນເຄື່ອງໝາຍທາງຂຶ້ນ-ລົງ, ທາງຂັບເຄື່ອນ, ລານຈອດເຮືອບິນ, ເສັ້ນທາງ ແລະ ລານຈອດສະໜາມບິນສາກົນປາກເຊ ໄລຍະການປະຕິບັດແມ່ນ 45 ວັນ.
2. ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ ທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວກັບການຈັດຕັ້ງປະຕິບັດກົດຫມາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019.
3. ການປະມູນນີ້ ອະນຸຍາດໃຫ້ທຸກໆ ບໍລິສັດທີ່ມີຄຸນນະວຸທິເຫມາະສົມ, ມີໃບອະນຸຍາດດຳເນີນທຸລະກິດຖືກຕ້ອງຕາມກົດຫມາຍ ທີ່ກ່ຽວຂ້ອງກັບການບໍລິການ ຜະລິດລະບົບປ້າຍສັນຍານ, ເຄື່ອງໝາຍແຕ້ມທາງ ແລະ ຕີເສັ້ນເຄື່ອງໝາຍຈາລະຈອນ ປະຈຳປີ 2025.
4. ບໍລິສັດທີ່ມີຄຸນນະວຸທິເຫມາະສົມ ສົນໃຈສາມາດຕິດຕໍ່ພົວພັນໄດ້ທີ່ ກອງສະໜາມບິນລາວ, ຜູ້ຮັບຜິດຊອບ: ທ່ານ ສອນມະນີ ໄພສະຫັວດ ໂທລະສັບ: 020 22219363 ແລະ ທ່ານ ນາງ ດາລີນ້ຳ ພົມມະຈັກ ໂທລະສັບ: 020 55002931 ໃນເວລາລັດຖະການ.
5. ບໍລິສັດໃດ ທີ່ຕ້ອງການຊື້ເອກະສານປະມູນຄົບຊຸດເປັນພາສາລາວ ຕ້ອງຍື່ນຫນັງສືສະເຫນີຫາ ທີ່ຢູ່ຂ້າງລຸ່ມນີ້, ເລີ່ມແຕ່ 11 ທັນວາ 2025 ເປັນຕົ້ນໄປ, ໃນລາຄາ 3,000,000 ກີບ. ຈຳນວນເງິນດັ່ງກ່າວນີ້ ຈະບໍ່ມີການສົ່ງຄືນ. ວິທີການຊຳລະຕ້ອງຈ່າຍເປັນເງິນສົດ.
6. ຊອງປະມູນຕ້ອງສົ່ງຕາມທີ່ຢູ່ລຸ່ມນີ້, ໃນເວລາ ຫລື ກ່ອນເວລາ 11:00 ໂມງ ຂອງວັນທີ 16 ມັງກອນ 2026 ທີ່ຫ້ອງປະຊຸມເບີ 02 ກອງສະໜາມບິນລາວ, ຊອງປະມູນໃດທີ່ສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ. ຊອງປະມູນທຸກໆຊອງຈະໄດ້ເປີດໃນເວລາ 11:10 ນາທີ ຂອງວັນດຽວກັນ , ໂດຍຊ້ອງຫນ້າຄະນະກຳມະການປະມູນ ແລະ ຕົວແທນຂອງຜູ້ປະມູນທີ່ສົນໃຈເຂົ້າຮ່ວມນຳ.
7. ທຸກໆ ຊອງປະມູນຕ້ອງໄດ້ ມີຫນັງສືຄ້ຳປະກັນການປະມູນເປັນເງິນສົດ ຫລື ແຊັກ (ວີຊ້າ) ບໍ່ໃຫ້ຫລຸດ 2% ຂອງລາຄາສະເຫນີເຂົ້າປະມູນ.
8. ທີ່ຢູ່: ກອງສະໜາມບິນລາວ, ໂທລະສັບ: 021 520542, ສຳນັກງານຕັ້ງຢູ່: ສະໜາມບິນສາກົນວັດໄຕ, ເມືອງສີໂຄດຕະບອງ, ນະຄອນຫຼວງວຽງຈັນ. ອ.✓

ເຊັນແທນ ຫົວໜ້າກອງ

ຮອງຫົວໜ້າກອງ

ສັກດາ ສຸຣິສັກ